**ມິຊຊາອາທິດທີ 2 ກຳນົດພຣະກຣິສຕະຄົມ ປີ A**
**ວັນທີ 8 ທັນວາ 2019**



**ພຣະວໍລະສານໂດຍນັກບຸນມັດເທວ 3, 1-12**

ໃນເວລານັ້ນ, ຢວງບັບຕິສຕາໄດ້ປາກົດຕົວເທດສະໜາຢູ່ທີ່ປ່ຽວໃນແຂວງຢູດາວ່າ: “ຈົ່ງເປັນທຸກກັບໃຈເຖີດ ຍ້ອນວ່າອານາຈັກສະຫວັນມາຮອດໃກ້ແລ້ວ”. ທ່ານຜູ້ນີ້ແລທີ່ປະພາສົກອີຊາຢາໄດ້ກ່າວເຖິງວ່າ ມີສຽງຮ້ອງເຕືອນໃນທີ່ປ່ຽວວ່າ: “ຈົ່ງຈັດຕຽມເສັ້ນທາງຂອງພຣະອົງເຈົ້າໃຫ້ຮາບພຽງ”.

ຢວງນຸ່ງຫົ່ມດ້ວຍໜັງອູດ, ຮັດແອວດ້ວຍເຊືອກໜັງ, ກິນຕັກແຕນກັບນ້ຳເຜີ້ງປ່າເປັນອາຫານ. ຊາວນະຄອນເຢລູຊາແລມແລະທົ່ວແຂວງຢູດາກັບພວກທີ່ອາໄສຢູ່ຕາມຂົງເຂດແມ່ນ້ຳຢໍແດນໄດ້ພາກັນມາຫາທ່ານ ແລະຮັບພິທີລ້າງຈາກທ່ານໃນແມ່ນ້ຳຢໍແດນ ດ້ວຍສາລະພາບບາບຂອງຕົນ. ເມື່ອເຫັນພວກຟາຣີເຊວແລະພວກຊາດູເຊວມາຮັບພິທີລ້າງທ່ານຈຶ່ງກ່າວວ່າ: ເຊື້ອຊາດງູເຫົ່າເອີຍ! ຜູ້ໃດບອກພວກທ່ານໃຫ້ປົບໜີພຣະພິໂຣດທີ່ຈະມາເຖິງ? ຈົ່ງທຳການໃຊ້ໂທດບາບໃຫ້ເໝາະສົມເຖີດແລະຢ່າອວດອ້າງຕົວວ່າ: ພວກເຮົາມີອາບຣາຮາມເປັນບິດາ. ຂ້າພະເຈົ້າຂໍບອກພວກທ່ານວ່າ ພຣະເປັນເຈົ້າມີລິດສາມາດບັນດານໃຫ້ກ້ອນຫີນເຫລົ່ານີ້ເກີດລູກຫລານໃຫ້ອາບຣາຮາມກໍໄດ້.

ບັດນີ້, ຄົມຂວານໄດ້ຈຸໃສ່ເຫງົ້າໄມ້ແລ້ວ. ຕົ້ນໄມ້ໃດທີ່ບໍ່ເກີດໝາກດີຈະຖືກບັກລົງເຜົາໄຟ. ສ່ວນຂ້າພະເຈົ້ານີ້, ຂ້າພະເຈົ້າຊຳລະລ້າງພວກທ່ານໃນນ້ຳເພື່ອໃຫ້ເປັນທຸກກັບໃຈ. ແຕ່ຜູ້ທີ່ຈະມາພາຍຫລັງຂ້າພະເຈົ້ານັ້ນ ຊົງອຳນາດຍິ່ງໃຫຍ່ກວ່າຂ້າພະເຈົ້າ, ຂ້າພະເຈົ້າເອງບໍ່ສົມຈະແກ້ສາຍເກີບໃຫ້ເພິ່ນຊ້ຳ. ເພິ່ນນັ້ນແລຈະຊຳລະລ້າງພວກທ່ານດ້ວຍພຣະຈິດເຈົ້າແລະໄຟ. ເພິ່ນຖືກະດົ້ງຟັດ, ເພິ່ນຈະຟັດເຂົ້າແລະກວາດລານໃຫ້ສະອາດ. ເພິ່ນຈະຂົນເຂົ້າຂຶ້ນໃສ່ເລົ້າ, ສ່ວນເຟືອງນັ້ນຈະເອົາໄປເຜົາໄຟທີ່ບໍ່ດັບມອດຈັກເທື່ອ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມທ 3, 1-12**

ວັນອາທິດທີ່ຜ່ານມາ, ວາຈາພຣະເຈົ້າໄດ້ເຊື້ອເຊີນພວກເຮົາໃຫ້ຕື່ນເຝົ້າແລະກຽມພ້ອມຢູ່ສະເໝີ. ຍ້ອນໃນເວລາທີ່ພວກເຮົາບໍ່ນຶກບໍ່ຝັນນັ້ນແລ້ວ ພຣະເຈົ້າຈະສະເດັດກັບມາ. ແຕ່ຄຳຖາມທີ່ຕາມມາກໍຄືຕ້ອງຕື່ນເຝົ້າຢ່າງໃດ?

ວາຈາພຣະເຈົ້າວັນອາທິດນີ້ເປັນເໝືອນຄຳຕອບຊ່ວຍພວກເຮົາໃຫ້ເຂົ້າໃຈວ່າການຕື່ນເຝົ້າທີ່ພຣະເຈົ້າປາດຖະໜາໃຫ້ພວກເຮົາກະທຳນັ້ນຄືການຜັນປ່ຽນຊີວິດຂອງຕົນຫລືເວົ້າອີກຢ່າງຄືການກັບຈິດປ່ຽນໃຈນັ້ນເອງ. ນັກບຸນມັດເທວຜູ້ຂຽນພຣະວໍລະສານວັນນີ້ໄດ້ຍົກແບບຢ່າງໃຫ້ພວກເຮົາເຫັນການກັບຈິດປ່ຽນໃຈຂອງນັກບຸນຢວງບັບຕິສຕາ. ນັກບຸນຢວງບັບຕິສຕາບໍ່ພຽງແຕ່ເປັນປະພາສົກທີ່ເດີນນຳໜ້າພຣະເຢຊູເຈົ້າເພື່ອປ່າວປະກາດໃຫ້ທຸກຄົນຮູ້ຈັກແລະດັດແປງເສັ້ນທາງຊີວິດຂອງຕົນເພື່ອຕ້ອນຮັບຜູ້ທີ່ຈະມານຳຫລັງທ່ານແລະຍິ່ງໃຫຍ່ກວ່າທ່ານເທົ່ານັ້ນ, ແຕ່ນັກບຸນຢວງບັບຕິສຕາຍັງປະຕິບັດສິ່ງທີ່ທ່ານປະກາດນັ້ນອີກດ້ວຍ. ສິ່ງນີ້ພວກເຮົາສາມາດເຫັນໄດ້ໃນວາຈາພຣະເຈົ້າວັນນີ້.

ມີສິ່ງໜຶ່ງທີ່ພວກເຮົາເຫັນໄດ້ໃນຊີວິດຂອງນັກບຸນຢວງບັບຕິສຕາຄື ທ່ານບໍ່ໄດ້ໃຊ້ຊີວິດຕາມກະແສຂອງໂລກ, ກະແສຂອງສັງຄົມບໍລິໂພກນິຍົມໃນສະໄໝຂອງທ່ານ. ແທນທີ່ນັກບຸນຢວງບັບຕິສຕາຈະປ່າວປະກາດການເປັນທຸກກັບໃຈຕາມສະໜາມຫລວງບ່ອນຊຸມນຸມຊົນ, ໃນໂຮງທັມຫລືຕາມບ້ານຕາມເມືອງຕ່າງໆ, ທ່ານພັດໃຊ້ຊີວິດແລະປ່າວປະກາດການກັບຈິດປ່ຽນໃຈໃນທີ່ປ່ຽວ ທຳໃຫ້ຜູ້ຄົນທີ່ອາໄສໃນນະຄອນເຢລູຊາແລມ, ທົ່ວແຂວງຢູດາແລະຕາມຂົງເຂດແມ່ນ້ຳຢໍແດນເປັນຈຳນວນຫລາຍອອກມາຫາທ່ານ. ເໝືອນກັບວ່າການດຳລົງຊີວິດຄຽງຄູ່ກັບການເທດສອນຂອງນັກບຸນຢວງບັບຕິສຕາທຳໃຫ້ທຸກຄົນທີ່ເຫັນແລະຟັງໄດ້ມີການຜັນປ່ຽນຊີວິດຂອງຕົນ. ການກັບຈິດປ່ຽນໃຈຂອງຝູງຊົນທີ່ມາຫາທ່ານຢວງບັບຕິສຕານີ້ສະແດງອອກດ້ວຍການສາລະພາບບາບຂອງຕົນແລະຮັບພິທີລ້າງຈາກທ່ານ.

ຈຸດນີ້ທຳໃຫ້ພວກເຮົາບໍ່ວ່າເປັນກຣິສຕັງ, ເປັນນັກບວດ, ເປັນພຣະສົງໄດ້ເບິ່ງຄືນຊີວິດຄວາມເຊື່ອແລະການເປັນພິຍານໃນຊີວິດຂອງພວກເຮົາ. ການປະກາດພຣະວາຈາແລະການດຳລົງຊີວິດຂອງພວກເຮົາໄດ້ຊ່ວຍໃຫ້ຄົນອື່ນຫັນມາຫາພຣະເຈົ້າບໍ? ພວກເຮົາໄດ້ປະຕິບັດສິ່ງທີ່ພວກເຮົາປະກາດແລະເທດສອນບໍ? ພວກເຮົາເອງໄດ້ກັບຈິດປ່ຽນໃຈຢູ່ບໍ? ຄຳຖາມເຫລົ່ານີ້ອາດຈະຊ່ວຍພວກເຮົາໃຫ້ຕື່ນຈາກການນອນຫລັບໃນຊີວິດການເປັນຢູ່ປະຈຳວັນຂອງພວກເຮົາ ແລະເປັນຕົ້ນໃນຊີວິດຝ່າຍວິນຍານຂອງພວກເຮົາເຊັ່ນດຽວກັນ.

ແນ່ນອນ, ກຳນົດພຣະກຣິສຕະຄົມຈະມີຄວາມໝາຍ ກໍຕໍ່ເມື່ອພວກເຮົາຮູ້ຈັກດັດແປງເສັ້ນທາງຊີວິດຂອງພວກເຮົາໃຫ້ຮາບພຽງ. ບ່ອນໃດທີ່ເປັນໂນນເປັນຂຸມ ໃຫ້ພວກເຮົາຖາກຖາງແລະຖົມດ້ວຍວາຈາພຣະເຈົ້າ. ບ່ອນທີ່ຍັງເປັນດິນແຂງໃຫ້ພວກເຮົາທົດດ້ວຍຄວາມຮັກແລະການໃຫ້ອະໄພຈາກພຣະເຈົ້າ.

ການເກີດມາຂອງພຣະບຸດພຣະເຈົ້າຈະມີຄວາມໝາຍສຳລັບພວກເຮົາ ກໍຂຶ້ນກັບການຜັນປ່ຽນຊີວິດການກະທຳຂອງພວກເຮົາ. ພວກເຮົາຈະໄດ້ຮັບການໄຖ່ກູ້ ກໍຕໍ່ເມື່ອພວກເຮົາເປີດໃຈຮັບເອົາອົງພຣະມະຫາໄຖ່ເຂົ້າມາໃນຊີວິດຂອງພວກເຮົາ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ